ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

# ຄຳແນະນຳຂອງລັດຖະມົນຕີ
# ວ່າດ້ວຍການຈັດຕັ້ງປະຕິບັດດຳລັດເລກທີ 70/ນຍ

ຈັດພິມໂດຍ : ອົງການປະກັນສັງຄົມແຫ່ງລັດ

2008

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ໞ✧✧✧✧✧✧ໟ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 2839/ຮສສ.

ນະຄອນຫລວງວຽງຈັນ, ວັນທີ 8 ສິງຫາ 2008.

# ຄຳແນະນຳຂອງລັດຖະມົນຕີ
# ວ່າດ້ວຍການຈັດຕັ້ງປະຕິບັດດຳລັດເລກທີ 70/ນຍ

---

- ອີງຕາມດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 138/ນຍ, ລົງວັນທີ 4 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 70/ນຍ, ລົງວັນທີ20 ເມສາ 2006 ວ່າດ້ວຍລະບອບປະກັນສັງຄົມແຫ່ງລັດ.

## ລັດຖະມົນຕີ
## ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຄຳແນະນຳ:

## ໝວດທີ I
## ຈຸດປະສົງ ແລະ ຄາດໝາຍ

**1.ຈຸດປະສົງ.**

ຄຳແນະນຳສະບັບນີ້ ເພື່ອອະທິບາຍບາງເນື້ອໃນ, ຫລັກການ, ວິທີການ ແລະ ມາດຕະການຕ່າງໆທີ່ໄດ້ກຳນົດໄວ້ໃນດຳລັດ ໃຫ້ລະອຽດ , ຈະແຈ້ງຕື່ມເຮັດໃຫ້ທຸກຄົນມີຄວາມເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

**2. ຄາດໝາຍ.**

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການອຸດໜູນຕ່າງໆເຊັ່ນ:ອຸດໜູນປະກັນສຸຂະພາບ,ເກີດລູກ ແລະ ບຳເນັດເກີດລູກ, ອຸປະຕິເຫດແຮງງານ ແລະ ພະຍາດອາຊີບ, ເສຍອົງຄະ, ປ່ວຍການ, ບຳນານ, ອຸດໜູນຄອບຄົວຜູ້ເສຍຊີວິດ ແລະ ສິ່ງສະການ ຕໍ່ພະນັກງານ, ລັດຖະກອນ, ທະຫານ, ເຈົ້າໜ້າທີ່ຕຳຫລວດ, ພະນັກງານບຳນານ, ເສຍອົງຄະ, ຜູ້ຢູ່ພາຍໃຕ້ການດູແລ ແລະ ພະນັກງານຕາມສັນຍາ ໃຫ້ມີຄວາມຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

3. **ອະທິບາຍຄຳສັບ.**

- ຜູ້ປະກັນຕົນ ໝາຍເຖິງພະນັກງານ, ລັດຖະກອນ, ທະຫານ, ເຈົ້າໜ້າທີ່ຕຳຫລວດ ແລະ ພະນັກງານຕາມສັນຍາ ທີ່ເຮັດວຽກຢູ່ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນທີ່ໄດ້ຮັບເງິນເດືອນຈາກງົບປະມານຂອງລັດ ແລະ ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມ.

- ຜູ້ໄດ້ຮັບອຸດໜູນໄລຍະຍາວ ໝາຍເຖິງພະນັກງານ - ລັດຖະກອນທີ່ໄດ້ເຖິງກະສຽນບຳນານ, ຜູ້ຮັບອຸດໜູນເສຍອົງຄະ ແລະ ຜູ້ໄດ້ຮັບອຸດໜູນຄອບຄົວຜູ້ເສຍຊີວິດເປັນລາຍເດືອນ.

- ຜູ້ໄດ້ຮັບອຸດໜູນໄລຍະສັ້ນ ໝາຍເຖິງ ຜູ້ທີ່ໄດ້ຮັບການອຸດໜູນຄອບຄົວຜູ້ເສຍຊີວິດເທື່ອດຽວ,ບຳເນັດ,ເກີດລູກ,ປ່ວຍການ ແລະ ສິ່ງສະການ.

- ຜູ້ຢູ່ໃຕ້ການດູແລ ໝາຍເຖິງ ຜົວ ຫລື ເມຍ, ລູກ, ພໍ່ ແລະ ແມ່ຂອງຜູ້ປະກັນຕົນ.

- ຜູ້ເກີດສິດປິ່ນປົວສຸຂະພາບ ໝາຍເຖິງຜູ້ປະກັນຕົນ,ຄູ່ສົມລົດ,ລູກຄີງ,ລູກລ້ຽງ,ລູກນ້າ ແລະ ພະນັກງານຕາມສັນຍາ ທີ່ໄດ້ຂຶ້ນທະບຽນຖືກຕ້ອງຕາມລະບຽບການຂອງ ອປລ.

## ໝວດທີ II

## ການປະກັນສຸຂະພາບ

1. **ການປະກັນສຸຂະພາບ.**

ການປະກັນສຸຂະພາບແມ່ນການຄ້ຳປະກັນໃຫ້ບັນດາສະມາຊິກປະກັນສັງຄົມເມື່ອເວລາເຈັບເປັນໄດ້ຮັບການບໍລິການດ້ານການແພດທີ່ປະກອບດ້ວຍ: ການກວດ, ປິ່ນປົວສຸຂະພາບ, ການກັນພະຍາດ, ການຟື້ນຟູສະມັດຕະພາບຂອງຮ່າງກາຍ, ການບໍລິການກ່ອນ ແລະ ຫຼັງການເກີດລູກ, ການປິ່ນປົວໃນກໍລະນີເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.

2. **ຜູ້ມີເງື່ອນໄຂໄດ້ຮັບການປະກັນສຸຂະພາບ:**

- ພະນັກງານ, ລັດຖະກອນ, ທະຫານ, ເຈົ້າໜ້າທີ່ຕຳຫຼວດ ແລະ ພະນັກງານຕາມສັນຍາ ທີ່ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ.
- ພະນັກງານບຳນານ, ເສຍອົງຄະ, ຜູ້ເສຍອົງຄະ, ຜູ້ຮັບອຸດໜູນໝ້າຍ, ອຸດໜູນລູກກຳພ້າ, ເງິນລ້ຽງດູ ພໍ່ ແລະ ແມ່, ພໍ່ ຫຼື ແມ່ ທີ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສຸຂະພາບ ( 2% ຂອງເງິນອຸດໜູນແຕ່ລະປະເພດ ) .
- ຜົວ ຫລື ເມຍຂອງຜູ້ປະກັນຕົນ, ພະນັກງານບຳນານ-ເສຍອົງຄະທີ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ໄດ້ຮັບການຄຸ້ມຄອງ ດ້ານປະກັນສຸຂະພາບຈາກ ລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ.
- ກໍລະນີຜູ້ປະກັນຕົນ, ພະນັກງານບຳນານ ແລະ ພະນັກງານເສຍອົງຄະເສຍທີ່ຊີວິດ, ຖ້າຄອບຄົວຂອງພວກກ່ງວບໍ່ມີເງື່ອນໄຂໄດ້ຮັບເງິນອຸດໜູນເປັນລາຍເດືອນ ຈາກກອງທຶນປະກັນສັງຄົມແມ່ນຈະໄດ້ຮັບການຄຸ້ມຄອງຕື່ມອີກ 03 ເດືອນ, ຍົກເວັ້ນແຕ່ຜູ້ສະໝັກໃຈທີ່ຖອກເງິນເຂົ້າກອງທຶນປະກັນສຸຂະພາບ.
- ລູກຄີງ, ລູກນ້າ, ລູກລ້ຽງ ຂອງຜູ້ປະກັນຕົນ, ພະນັກງານບຳນານ,ເສຍອົງຄະ ທີ່ຖືກຕ້ອງຕາມກົດໝາຍ ແລະ ຜູ້ທີ່ບໍ່ໄດ້ຮັບການຄຸ້ມຄອງຈາກລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ ຊຶ່ງມີອາຍຸແຕ່ 18 ປີລົງມາ; ຜູ້ທີ່ຍັງ

ຮຽນໜັງສືຕາມລະບົບການສຶກສາໂດຍມີການຢັ້ງຢືນຈາກສະຖາບັນທີ່ກ່ຽວຂ້ອງ ກໍ່ຈະໄດ້ຮັບການຄຸ້ມຄອງຈົນຄົບອາຍຸ 23 ປີ, ແຕ່ຍົກເວັ້ນຜູ້ທີ່ໄດ້ແຕ່ງງານແລ້ວ.

3. **ສໍາລັບເນື້ອໃນ, ຫລັກການ ແລະ ວິທີການບໍລິການດ້ານການແພດຈະມີລະບຽບສະເພາະ.**

## ໝວດທີ III
## ການອຸດໜູນເກີດລູກ ແລະ ບໍາເນັດເກີດລູກ

1. **ການອຸດໜູນເກີດລູກ.**

ການອຸດໜູນເກີດລູກແມ່ນການຈ່າຍເງິນຈາກກອງທຶນປະກັນສັງຄົມ ເພື່ອເປັນການທົດແທນເງິນເດືອນຂອງຜູ້ປະກັນຕົນເພດຍິງທີ່ບໍ່ສາມາດອອກແຮງງານໄດ້ພາຍຫຼັງເກີດລູກຍ້ອນສຸຂະພາບຂອງຜູ້ກ່ຽວ ຫລື ຂອງລູກຍັງບໍ່ທັນແຂງແຮງ ແລະ ການຈັດຕັ້ງໄດ້ໂຈະການຈ່າຍເງິນເດືອນໃຫ້ຜູ້ກ່ຽວໄວ້ຊົ່ວຄາວ.

2. **ເງື່ອນໄຂການຮັບອຸດໜູນເກີດລູກ.**

ຜູ້ປະກັນຕົນເພດຍິງທີ່ໄດ້ຮັບອະນຸຍາດລາພັກເກີດລູກຈະໄດ້ຮັບເງິນເດືອນ 3 ເດືອນເຕັມ, ຫຼັງ ຈາກນັ້ນ ຖ້າແພດຢັ້ງຢືນວ່າຜູ້ກ່ຽວຫລືລູກຍັງບໍ່ທັນແຂງແຮງຕ້ອງພັກຜ່ອນຕື່ມແລະ ການຈັດຕັ້ງໄດ້ໂຈະ ການຈ່າຍເງິນເດືອນໃຫ້ຜູ້ກ່ຽວແລ້ວ ຈະໄດ້ຮັບເງິນອຸດໜູນເກີດລູກຈາກກອງທຶນປະກັນສັງຄົມ ແຕ່ບໍ່ໃຫ້ເກີນ 3 ເດືອນ.

3. **ການຄິດໄລ່ເງິນອຸດໜູນເກີດລູກ.**

ເງິນອຸດໜູນເກີດລູກ ຊຶ່ງຈ່າຍເປັນລາຍເດືອນນັ້ນເທົ່າກັບ 60% ຂອງເງິນເດືອນໆສຸດທ້າຍຂອງຜູ້ກ່ຽວກ່ອນລາພັກເກີດລູກ.

ຕົວຢ່າງ: ນ.ກໍ ເປັນຜູ້ປະກັນຕົນໄດ້ເກີດລູກ, ເງິນເດືອນໆສຸດທ້າຍເທົ່າກັບ 510.000ກີບ,**ເງິນອຸດໜູນເກີດລູກເປັນລາຍເດືອນ = 510.000 ກີບ X 60% = 306.000 ກີບ.**

4. **ເງິນບໍາເນັດເກີດລູກ.**

**ເງິນບໍາເນັດ**ແມ່ນເງິນຊ່ວຍເຫລືອຈາກກອງທຶນປະກັນສັງຄົມ ປະກອບສ່ວນຕໍ່ການໃຊ້ຈ່າຍທີ່ເກີດຂຶ້ນໃນການເກີດລູກ ຊຶ່ງຈະຈ່າຍເທື່ອດຽວຕໍ່ຄົນ ຕໍ່ຄັ້ງ, ໃນກໍລະນີແຝດ ກໍ່ໃຫ້ຄູນຕາມຈໍານວນລູກຕົວຈິງ.

5. **ຜູ້ມີສິດຮັບເງິນ ບໍາເນັດເກີດລູກ.**

ຜູ້ປະກັນຕົນເພດຍິງ,ເມຍຂອງຜູ້ປະກັນຕົນທີ່ບໍ່ໄດ້ຮັບການຄຸ້ມຄອງຈາກລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ.

6. **ການຄິດໄລ່ເງິນບໍາເນັດເກີດລູກ.**

ເງິນບໍາເນັດເກີດລູກແມ່ນ ເທົ່າກັບ 60% ຂອງເງິນເດືອນລັດບໍລິຫານຕໍ່າສຸດ ແລະ ໃຫ້ພຽງ 1 ຄັ້ງຕໍ່ 1 ຄົນເທົ່ານັ້ນ, ໃນກໍລະນີແຝດກໍ່ໃຫ້ຄູນຕາມຈໍານວນລູກຕົວຈິງ.

ຕົວຢ່າງ : ນ.ຂໍ ເກີດລູກ, ເງິນເດືອນພື້ນຖານລັດບໍລິຫານຕໍ່າສຸດ ເທົ່າກັບ 337.500 ກີບ,**ເງິນບໍາເນັດເກີດລູກເທົ່າກັບ 337.500 ກີບ X 60% = 202.500 ກີບ.**

**ກໍລະນີລູກແຝດ 2 ຄົນ, ເງິນບໍາເນັດເກີດລູກ = 202.500 ກີບ X 2 = 405.000 ກີບ.**

## ໝວດທີ IV
## ການອຸດໜູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ

**1. ອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.**

- ອຸປະຕິເຫດແຮງງານ ແມ່ນອຸປະຕິເຫດທີ່ເກີດຂຶ້ນ ແລະ ເຮັດໃຫ້ພະນັກງານ, ລັດຖະກອນໄດ້ຮັບບາດເຈັບ, ເສັຽອົງຄະ, ພິການຫລືເສັຽຊີວິດໃນເວລາທີ່ເຄື່ອນໄຫວປະຕິບັດໜ້າທີ່ວຽກງານຢູ່ສະຖານທີ່ເຮັດວຽກ, ສະຖານທີ່ພັກຜ່ອນ, ໃນຮ້ານອາຫານ ຫຼື ສະຖານທີ່ອື່ນໆໃນຂອບເຂດຄວາມຮັບຜິດຊອບຂອງການຈັດຕັ້ງທີ່ຜູ້ປະກັນຕົນສັງກັດຢູ່ ແລະ ຕາມການມອບໝາຍຂອງການຈັດຕັ້ງນັ້ນ.

- ພະຍາດອາຊີບແມ່ນພະຍາດທຸກຊະນິດທີ່ເກີດຈາກການປະຕິບັດໜ້າທີ່ຊຶ່ງມີຜົນກະທົບຕໍ່ຈິດໃຈ ແລະ ຮ່າງກາຍຂອງພະນັກງານລັດຖະກອນ ( ລາຍລະອຽດຈະມີບັນຊີພະຍາດອາຊີບສະເພາະ ) ໃນກໍລະນີຜູ້ປະກັນຕົນຕິດພະຍາດຊຶ່ງຍັງບໍ່ທັນມີໃນບັນຊີດັ່ງກ່າວແຕ່ໄດ້ຮັບການຢັ້ງຢືນຈາກແພດວ່າ ເປັນພະຍາດທີ່ເກີດຂຶ້ນຈາກການປະຕິບັດໜ້າທີ່ແທ້ກໍ່ມີສິດໄດ້ຮັບການອຸດໜູນຕ່າງໆເຊັ່ນກັນ.

**2. ເງື່ອນໄຂຮັບການອຸດໜູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.**

- ໃນເມື່ອຖືກບັນຈຸເຂົ້າເປັນພະນັກງານ, ລັດຖະກອນ ການຈັດຕັ້ງໃດໜຶ່ງຂອງລັດ ຜູ້ນັ້ນຈະຖືກຄຸ້ມຄອງກ່ຽວກັບອຸປະຕິເຫດແຮງງານ ແລະ ພະຍາດອາຊີບທັນທີໂດຍບໍ່ມີເງື່ອນໄຂອື່ນເພີ້ມຕື່ມໃດໆທັງໝົດ.

- ໃນກໍລະນີອຸປະຕິເຫດແຮງງານ ຫລື ພະຍາດອາຊີບທີ່ເກີດຂຶ້ນນັ້ນ ຫາກຖືກພິສູດໄດ້ວ່າເປັນການຈິງໃຈເຮັດໃຫ້ເກີດຂຶ້ນສິດທິຕໍ່ການອຸດໜູນຕ່າງໆຈະເປັນໂມຄະ.

**3. ປະເພດການອຸດໜູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບມີດັ່ງລຸ່ມນີ້:**

- ການປິ່ນປົວ ແລະ ຟື້ນຟູສຸຂະພາບ.
- ອຸດໜູນເສຍກຳລັງແຮງງານຊົ່ວຄາວ.
- ອຸດໜູນເສຍອົງຄະ ຫຼື ເສຍກຳລັງແຮງງານຖາວອນ.
- ຄ່າແຮງງານຜູ້ດູແລ ໃນກໍລະນີຜູ້ເສຍອົງຄະຊ່ວຍຕົນເອງບໍ່ໄດ້.
- ອຸດໜູນສິ່ງສະການ.
- ອຸດໜູນຄອບຄົວໃນກໍລະນີຜູ້ປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບຫາກເສຍຊີວິດ.

**4. ສິດໄດ້ຮັບການອຸດໜູນ ແລະ ວິທີຄິດໄລ່ເງິນອຸດໜູນເສຍອົງຄະ ຫລື ເສຍກຳລັງແຮງງານຊົ່ວຄາວ.**

- ສິດທິຮັບການອຸດໜູນເສຍອົງຄະ ຫຼື ເສຍກຳລັງແຮງງານຊົ່ວຄາວ, ຜູ້ປະກັນຕົນທີ່ປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບຊຶ່ງມີຄວາມຈຳເປັນຕ້ອງພັກຜ່ອນຕາມຄຳສັ່ງຂອງແພດ; ຜູ້ກ່ຽວມີສິດພັກປິ່ນປົວໃນໄລຍະ 3 ເດືອນໂດຍຮັບເງິນເດືອນປົກກະຕິ, ຫຼັງຈາກນັ້ນ ຖ້າອາການຂອງຜູ້ກ່ຽວຍັງບໍ່ປົກກະຕິ ແລະ ການຈັດຕັ້ງໄດ້ໂຈະການຈ່າຍເງິນເດືອນໃຫ້ຜູ້ກ່ຽວ; ກອງທຶນປະກັນສັງຄົມຈະເປັນຜູ້ສືບຕໍ່ຈ່າຍເງິນ ອຸດໜູນເສັຽກຳລັງແຮງງານຊົ່ວຄາວ ເພື່ອທົດແທນເງິນເດືອນຂອງຜູ້ກ່ຽວ.

- **ວິທີຄິດໄລ່ເງິນອຸດໜູນເສຍອົງຄະ ຫລື ເສຍກຳລັງແຮງງານຊົ່ວຄາວ.**

ເງິນອຸດໜູນເສຍອົງຄະ ຫລື ເສຍກຳລັງແຮງງານຊົ່ວຄາວເທົ່າກັບ 60% ຂອງເງິນເດືອນໆສຸດທ້າຍ

ກ່ອນເກີດອຸປະຕິເຫດແຮງງານ ຫລື ພະຍາດອາຊີບ ແລະ ມີໄລຍະບໍ່ເກີນ 6 ເດືອນ, ຫຼັງຈາກ 6 ເດືອນແລ້ວ ຈະຕ້ອງມີການກວດກາສຸຂະພາບຄືນໃໝ່ ຖ້າແພດຢັ້ງຢືນວ່າ:

- ສຸຂະພາບຂອງຜູ້ກ່ຽວຈະດີຄືນພາຍໃນ 6 ເດືອນຂ້າງໜ້າຜູ້ປະກັນຕົນຈະໄດ້ຮັບເງິນອຸດໜູນເສຍກຳລັງແຮງງານຊົ່ວຄາວ ຕໍ່ແຕ່ບໍ່ເກີນ 6 ເດືອນ.
- ຖ້າສຸຂະພາບຂອງຜູ້ກ່ຽວຈະບໍ່ດີຂຶ້ນພາຍໃນ 6 ເດືອນຂ້າງໜ້າຜູ້ປະກັນຕົນຈະໄດ້ຮັບການປະເມີນການສູນເສຍກຳລັງແຮງງານຕາມທີ່ກຳນົດໄວ້ໃນຕາຕະລາງ 1 ຂອງຄຳແນະນຳສະບັບນີ້.

<u>ຕົວຢ່າງ</u>: ທ່ານ ກ ເສຍກຳລັງແຮງງານຊົ່ວຄາວ ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວກ່ອນຫັກເງິນສົມທົບເຂົ້າກອງທຶນປະກັນສັງຄົມເທົ່າກັບ 450.000 ກີບ. **ເງິນອຸດໜູນເສຍກຳລັງແຮງງານ ຊົ່ວຄາວ = 450.000 ກີບ X 60% = 270.000 ກີບ.**

## 5. ສິດໄດ້ຮັບການອຸດໜູນ ແລະ ວິທີຄິດໄລ່ເງິນອຸດໜູນເສຍອົງຄະ ຫລື ເສຍກຳລັງແຮງງານຖາວອນ.

- ຜູ້ປະກັນຕົນທີ່ເສຍອົງຄະ ຫລື ເສຍກຳລັງແຮງງານຖາວອນ ອັນເນື່ອງມາຈາກອຸປະຕິເຫດແຮງງານ ຫລື ພະຍາດອາຊີບຊຶ່ງບໍ່ສາມາດອອກແຮງງານເປັນປະຈຳໄດ້ມີສິດທິໄດ້ຮັບເງິນອຸດໜູນເສຍອົງຄະ ຫຼື ເສຍກຳລັງແຮງງານຖາວອນ.
- ການປະເມີນເສຍອົງຄະ ຫລື ເສຍກຳລັງແຮງງານ: ຜູ້ປະກັນຕົນທີ່ຖືກອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ຈະຕ້ອງໄດ້ຮັບການປະເມີນ ແລະ ຢັ້ງຢືນລະດັບການເສຍອົງຄະ ຫລື ເສຍກຳລັງແຮງງານ ຈາກສະພາການແພດ ເພື່ອຮັບການອຸດໜູນຕາມປະເພດທີ່ກຳນົດໄວ້ ໃນຕາຕະລາງລຸ່ມນີ້:

**ຕາຕະລາງ 1. ຕາຕະລາງປະເພດເສຍອົງຄະ ຫລື ເສຍກຳລັງແຮງງານ:**

| ລະດັບການເສຍອົງຄະ | ປະເພດເສຍອົງຄະ | ຮູບການອຸດໜູນ |
|---|---|---|
| 81 -100% =100% | I | ເປັນລາຍເດືອນ |
| 71 - 80% = 80% | II | ເປັນລາຍເດືອນ |
| 61 - 70% = 70% | III | ເປັນລາຍເດືອນ |
| 51 - 60% = 60% | IV | ເປັນລາຍເດືອນ |
| 41 - 50% = 50% | V | ເປັນລາຍເດືອນ |
| 31 - 40% = 40% | VI | ອຸດໜູນເທື່ອດຽວ |
| 21 - 30% = 30% | VII | ອຸດໜູນເທື່ອດຽວ |
| > 20% = 20% | VIII | ອຸດໜູນເທື່ອດຽວ |

- ການຄິດໄລ່ເງິນອຸດໜູນເສຍອົງຄະ ຫລື ເສຍກຳລັງແຮງງານຖາວອນ ມີ 2 ວິທີຄື:
  - ເງິນອຸດໜູນເສຍອົງຄະເປັນລາຍເດືອນ ໃຫ້ເອົາ 80% ຂອງເງິນເດືອນໆສຸດທ້າຍ ຄູນເປີເຊັນການເສຍອົງຄະ ຕາມສູດລຸ່ມນີ້:

**ເງິນອຸດໜູນເປັນລາຍເດືອນເທົ່າກັບ80% ຂອງເງິນເດືອນໆສຸດທ້າຍ ຄູນ ເປີເຊັນ ເສຍອົງຄະ ຫຼື ເສຍກຳລັງແຮງງານ**

<u>ຕົວຢ່າງ</u>: ທ່ານ ຂ ຖືກປະເມີນເປັນຜູ້ເສຍອົງຄະປະເພດ IV, ເປີເຊັນເສຍອົງຄະ ເທົ່າກັບ 60%, ເງິນ

ເດືອນໆສຸດທ້າຍ ເທົ່າກັບ 649.000 ກີບ.

**ເງິນອຸດໜູນລາຍເດືອນ = 80% x 649.000 ກີບ x 60% = 311.520 ກີບ.**

ສຳລັບຜູ້ທີ່ບໍ່ສາມາດອອກແຮງງານໄດ້ ຫລື ຮັບແຕ່ເງິນອຸດໜູນເສຍອົງຄະນັ້ນ, ຖ້າກໍລະນີເງິນອຸດໜູນຫາກນ້ອຍກ່ວາ ເງິນເດືອນພື້ນຖານລັດບໍລິຫານຊັ້ນ1/5 ໃຫ້ເອົາເງິນເດືອນພື້ນຖານລັດບໍລິຫານຊັ້ນ1/5ເລີຍ.

- ການອຸດໜູນເທື່ອດຽວໃຫ້ຄິດໄລ່ ຕາມສູດລຸ່ມນີ້:

**ເງິນອຸດໜູນເທື່ອດຽວເທົ່າກັບ% ເສຍອົງຄະຫຼືເສຍ ກຳລັງແຮງງານ ຄູນ ເງິນເດືອນໆສຸດທ້າຍ ຄູນ 12 ເດືອນ**

<u>ຕົວຢ່າງ</u>: ທ່ານ ຄໍາ ເສຍອົງຄະປະເພດVII ເທົ່າກັບ30%, ເງິນເດືອນໆສຸດທ້າຍເທົ່າກັບ 500.000 ກີບ.

**ເງິນອຸດໜູນເທື່ອດຽວ = 30% x 500.000 ກີບ x 12 ເດືອນ = 1.800.000 ກີບ.**

6. **ເງິນອຸດໜູນສິ່ງສະການ:**

ເງິນອຸດໜູນສິ່ງສະການຜູ້ປະກັນຕົນເທົ່າກັບເງິນເດືອນໆສຸດທ້າຍຂອງຜູ້ກ່ຽວ ຄູນ 9 ເດືອນ; ໃນກໍລະນີພະນັກງານເຂົ້າການໃໝ່ບໍ່ທັນໄດ້ຮັບເງິນເດືອນໃຫ້ຖືເອົາເງິນຕາມຂັ້ນ/ຊັ້ນຂອງຜູ້ກ່ຽວເປັນບ່ອນອີງໃນການຄິດໄລ່.

7 . **ເງິນອຸດໜູນຄອບຄົວຂອງຜູ້ເສຍຊີວິດ ມີ 2 ປະເພດຄື:**

- ເງິນອຸດໜູນເທື່ອດຽວ ໃຫ້ປະຕິບັດຕາມສູດລຸ່ມນີ້ :

**ເງິນອຸດໜູນເທື່ອດຽວ = <u>ເງິນເດືອນໆສຸດທ້າຍ x ຈຳນວນເດືອນປະກັນຕົນ</u>**

**12 ເດືອນ**

<u>ຕົວຢ່າງ</u> : ທ່ານ ງໍ ຈ່າຍເງິນເຂົ້າກອງທຶນປະກັນສັງຄົມ10 ປີ, ຜູ້ກ່ຽວເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ, ເງິນເດືອນໆສຸດທ້າຍເທົ່າກັບ766.000 ກີບ.

**ເງິນອຸດໜູນເທື່ອດຽວ = <u>766.000 ກີບ x 120 ເດືອນ</u> = 7.660.000 ກີບ**

**12 ເດືອນ**

**ໃນກໍລະນີຜູ້ປະກັນຕົນຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຕ່ຳກ່ວາ 72 ເດືອນ ແມ່ນໃຫ້ຖືເອົາ 72 ເດືອນເປັນບ່ອນອີງເພື່ອຄິດໄລ່.**

<u>ຕົວຢ່າງ</u> : ທ່ານ ຈໍ ເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ, ແຕ່ຜູ້ກ່ຽວໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມພຽງ 30 ເດືອນ, ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວເທົ່າກັບ 568.000 ກີບ.

**ເງິນອຸດໜູນເທື່ອດຽວ = <u>568.000ກີບ x 72ເດືອນ</u> = 3.408.000 ກີບ.**

**12 ເດືອນ**

- ເງິນອຸດໜູນເປັນລາຍເດືອນປະກອບດ້ວຍ ເງິນອຸດໜູນໝ້າຍ,ອຸດໜູນກຳພ້າ, ລ້ຽງດູພໍ່ ແລະ ແມ່, ພໍ່ ຫລື ແມ່ ຊຶ່ງຈະຈ່າຍໃຫ້ຜົວ ຫລື ເມຍ, ລູກ, ພໍ່ ຫຼື ແມ່ຂອງຜູ້ເສຍຊີວິດນັ້ນ ຕາມອັດຕາ 20%, 30% ແລະ 40% ແລ້ວແຕ່ເງື່ອນໄຂ, ໃນກໍລະນີໃດກໍ່ຕາມເງິນອຸດໜູນທັງໝົດ ຈະບໍ່ເກີນ 80% ຂອງເງິນບຳນານສົມມຸດຖານທີ່ໃຊ້ເປັນບ່ອນອີງໃນການຄິດໄລ່.

ເງິນບຳນານສົມມຸດຖານ ເທົ່າກັບເງິນເດືອນໆສຸດທ້າຍ ຂອງຜູ້ປະກັນຕົນທີ່ເສຍຊີວິດຄູນ 2%

ຄູນ ຈຳນວນປີຈ່າຍເງິນສົມທົບຕາມສູດລຸ່ມນີ້:

**ເງິນບຳນານສົມມຸດຖານເທົ່າກັບເງິນເດືອນໆສຸດທ້າຍ ຄູນ 2% ຄູນ ຈຳນວນປີຈ່າຍເງິນສົມທົບ.**

**ກໍລະນີຈຳນວນປີການຈ່າຍເງິນສົມທົບໜ້ອຍກ່ວາ 15 ປີໃຫ້ກຳນົດເອົາ 15 ປີ ເພື່ອເປັນບ່ອນອີງໃນການຄິດໄລ່.**

- ຜູ້ມີສິດໄດ້ຮັບເງິນອຸດໜູນໝ້າຍ ( ຜົວ ຫລື ເມຍ ) ຕ້ອງຄົບເງື່ອນໄຂ 1 ໃນ 2 ກໍລະນີດັ່ງລຸ່ມນີ້ :

**<u>ກໍລະນີທີ 1</u>**:

➢ ຜູ້ເປັນໝ້າຍນັ້ນ ໄລຍະຜ່ານມາໄດ້ອາໃສຜູ້ປະກັນຕົນທີ່ເສຍຊີວິດ ເປັນຜູ້ລ້ຽງດູທັງໝົດ ຍ້ອນຜູ້ກ່ຽວບໍ່ສາມາດຫາລາຍໄດ້ດ້ວຍຕົນເອງ ແລະ ບໍ່ມີແຫຼ່ງລາຍຮັບອື່ນໆເຊັ່ນ: ການຄ້າຂາຍ, ການໃຫ້ເຊົ່າ, ດອກເບ້ຍ ແລະ ອື່ນໆໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ ແລະ ມີການກວດກາຈາກ ອປລ ຂັ້ນທ້ອງຖິ່ນນັ້ນ.

➢ ຖ້າເປັນ ເມຍ ຫລື ເປັນຜົວຕ້ອງມີອາຍຸຄົບ 44 ປີຂຶ້ນໄປ ;

➢ ບໍ່ແມ່ນຜູ້ທີ່ໄດ້ຮັບເງິນອຸດໜູນເສຍອົງຄະ ຫຼື ບຳນານຈາກລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ.

**<u>ກໍລະນີທີ 2</u>**:

➢ ເປັນຜູ້ທີ່ສະພາການແພດຢັ້ງຢືນວ່າ : ຜູ້ກ່ຽວເສຍອົງຄະ ບໍ່ສາມາດອອກແຮງງານໄດ້ .

➢ ບໍ່ໄດ້ຮັບການອຸດໜູນໄລຍະຍາວ ຈາກລະບົບປະກັນສັງຄົມ ແບບບັງຄັບໃດໜຶ່ງ.

❖ <u>ວິທີຄິດໄລ່ເງິນອຸດໜູນໝ້າຍ</u> :

ເງິນອຸດໜູນໝ້າຍຂອງຜູ້ປະກັນຕົນທີ່ເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບເທົ່າກັບ 40% ຂອງເງິນອຸດໜູນບຳນານສົມມຸດຖານ.

<u>ຕົວຢ່າງ</u>: ທ່ານ ຂໍ ເປັນຜູ້ປະກັນຕົນທີ່ເສຍຊີວິດ ຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ, ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວກ່ອນເສຍຊີວິດ = 580.000 ກີບ, ຈຳນວນປີຈ່າຍເງິນສົມທົບ =10 ປີ,ເງິນບຳນານສົມມຸດຖານ = 580.000 ກີບ x 2%x15 ປີ = 174.000 ກີບ.

**ເງິນອຸດໜູນໝ້າຍ = 40% x 174.000 ກີບ = 69.600 ກີບ.**

- <u>ຜູ້ມີສິດໄດ້ຮັບເງິນອຸດໜູນລູກກຳພ້າແມ່ນບຸກຄົນດັ່ງລຸ່ມນີ້:</u>

ລູກຄີງ, ລູກນ້າ, ລູກລ້ຽງ ທີ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ຢູ່ໃຕ້ການຄຸ້ມຄອງຂອງລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ ຊຶ່ງມີອາຍຸແຕ່ 18 ປີລົງມາ ຍົກເວັ້ນຜູ້ທີ່ໄດ້ແຕ່ງງານແລ້ວ ໃນກໍລະນີຍັງສືບຕໍ່ຮຽນໜັງສື ຕ້ອງມີການຢັ້ງຢືນຈາກໂຮງຮຽນທີ່ກ່ຽວຂ້ອງແມ່ນຈະໄດ້ຮັບການຄຸ້ມຄອງຈົນຄົບອາຍຸ 23 ປີ.

❖ **<u>ການຄິດໄລ່ເງິນອຸດໜູນລູກກຳພ້າ:</u>**

ກໍລະນີຄອບຄົວຜູ້ເສຍຊີວິດໄດ້ຮັບເງິນອຸດໜູນໝ້າຍ ລູກແຕ່ລະຄົນຈະໄດ້ຮັບ 20% ຂອງເງິນບຳນານສົມມຸດຖານ, ແຕ່ເງິນອຸດໜູນລູກທັງໝົດບໍ່ໃຫ້ເກີນ 60% ຂອງເງິນບຳນານສົມມຸດຖານ.

<u>ຕົວຢ່າງ</u>: ທ່ານ ສໍ ທີ່ເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ, ຜູ້ກ່ຽວມີລູກ 2 ຄົນ.

ເງິນອຸດໜູນກຳພ້າ = 20% x 174.000 ກີບ x 2 ຄົນ = 69.600 ກີບ

ກໍລະນີຄອບຄົວຜູ້ເສຍຊີວິດບໍ່ໄດ້ຮັບເງິນອຸດໜູນໝ້າຍ ລູກແຕ່ລະຄົນຈະໄດ້ຮັບ 30% ຂອງເງິນ

ບຳນານສົມມຸດຖານ, ແຕ່ເງິນອຸດໜູນລູກທັງໝົດບໍ່ໃຫ້ເກີນ 60% ຂອງເງິນບຳນານສົມມຸດຖານ.

ຕົວຢ່າງ: ທ່ານ ຊໍ ເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ, ຜູ້ກ່ຽວມີລູກ 3 ຄົນ.

ເງິນອຸດໜູນກຳພ້າ = 174.000 ກີບ x 60% = 104.400 ກີບ

- ຜູ້ມີສິດຮັບເງິນອຸດໜູນລ້ຽງດູ ພໍ່ ແລະ ແມ່, ພໍ່ ຫລື ແມ່ ຈະຕ້ອງຄົບໜຶ່ງໃນສອງກໍລະນີດັ່ງລຸ່ມນີ້:
  - ➢ ຜູ້ປະກັນຕົນທີ່ ເສຍຊີວິດນັ້ນ ເປັນລູກຜູ້ດຽວທີ່ລ້ຽງດູ ພໍ່ ແມ່, ຊຶ່ງແມ່ມີ ອາຍຸ 55 ປີ ແລະ ພໍ່ມີ ອາຍຸ 60 ປີ ຂຶ້ນໄປ;
  - ➢ ພໍ່ ແລະ ແມ່, ພໍ່ ຫລື ແມ່ ນັ້ນເປັນຜູ້ເສຍອົງຄະໂດຍມີສະພາການແພດຢັ້ງຢືນ.

❖ **ວິທີຄິດໄລ່ເງິນອຸດໜູນລ້ຽງດູ ພໍ່ ແລະ ແມ່, ພໍ່ ຫລື ແມ່:**

ກໍລະນີພໍ່ ແລະ ແມ່, ພໍ່ ຫລື ແມ່ ຂອງຜູ້ເສຍຊີວິດບໍ່ມີຜູ້ລ້ຽງດູ, ເງິນອຸດໜູນລ້ຽງດູ ພໍ່ ແລະ ແມ່, ພໍ່ ຫລື ແມ່ ເທົ່າກັບ 40% ຂອງເງິນບຳນານສົມມຸດຖານ, ແຕ່ເງິນອຸດໜູນທັງ 2 ຄົນລວມກັນສູງສຸດບໍ່ເກີນ 60% ຂອງເງິນບຳນານສົມມຸດຖານ.

ຕົວຢ່າງ: ທ່ານ ຍໍ ເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ, ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວເທົ່າກັບ 545.000 ກີບ, ຈຳນວນປີຈ່າຍເງິນສົມທົບ 10 ປີ,ເງິນບຳນານສົມມຸດຖານຂອງທ່ານ ຍໍ ເທົ່າກັບ 545.000 ກີບ x 2 % x 15 ປີ = 163.500 ກີບ.

ກໍລະນີມີແຕ່ພໍ່ ຫລື ແມ່: ເງິນອຸດໜູນລ້ຽງດູ = 40% x 163.500 ກີບ = 65.400 ກີບ.

ກໍລະນີມີທັງພໍ່ ແລະແມ່: ເງິນອຸດໜູນລ້ຽງດູ = 60% x 163.500 ກີບ = 98.100 ກີບ.

8. **ຄ່າແຮງງານຂອງຜູ້ດູແລຜູ້ເສຍອົງຄະ:**

ກໍລະນີຜູ້ເສຍອົງຄະທີ່ໄດ້ຮັບການຢັ້ງຢືນຈາກສະພາການແພດວ່າເປັນຜູ້ເສຍອົງຄະ ຫຼື ເສຍກຳລັງແຮງງານຖາວອນ ບໍ່ສາມາດຊ່ວຍຕົນເອງໄດ້ ຊຶ່ງຕ້ອງມີຜູ້ດູແລ, ຄ່າແຮງງານຂອງຜູ້ດູແລນັ້ນເທົ່າກັບ ເງິນເດືອນລັດບໍລິຫານຕ່ຳສຸດໃນແຕ່ລະໄລຍະ.

## ໝວດທີ V
## ການອຸດໜູນຜູ້ເສຍອົງຄະ

1. **ການອຸດໜູນເສຍອົງຄະ ຫລື ເສຍກຳລັງແຮງງານ :**

ການອຸດໜູນຜູ້ເສຍອົງຄະ ຫລື ເສຍກຳລັງແຮງງານແມ່ນການອຸດໜູນເປັນລາຍເດືອນຈາກກອງທຶນປະກັນສັງຄົມຕໍ່ຜູ້ສູນເສຍອະໄວຍະວະ, ຮ່າງກາຍ ຫລື ສູນເສຍສະມັດຕະພາບແຮງງານ ຫລື ສູນເສຍສະພາວະປົກກະຕິຂອງຈິດໃຈທີ່ບໍ່ກ່ຽວຂ້ອງກັບອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ຈົນບໍ່ສາມາດອອກແຮງງານໄດ້ໂດຍມີການຢັ້ງຢືນຈາກສະພາການແພດ ແລະ ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມຄົບ 5 ປີ ຂຶ້ນໄປຈຶ່ງມີສິດໄດ້ຮັບການອຸດໜູນເສຍອົງຄະ ( ຕາມຕາຕະລາງ 2 ).

2. **ການປະເມີນລະດັບການເສຍອົງຄະ ຫລື ເສຍກຳລັງແຮງງານ:**

ໃນແຕ່ລະປີຕ້ອງມີການປະເມີນລະດັບເສຍອົງຄະ ຫລື ເສຍກຳລັງແຮງງານຄືນໃໝ່ຈາກສະພາການແພດ, ໃຫ້ເອົາຜົນຂອງ ການປະເມີນຄືນໃໝ່ນັ້ນເປັນບ່ອນອີງໃນການຄິດໄລ່ເງິນອຸດໜູນຕາມຕາຕະ

24/VII
ຫ້າມຈຳໜ່າຍ

ລາງ 2 ລຸ່ມນີ້:

**ຕາຕະລາງ 2: ຕາຕະລາງປະເພດເສຍອົງຄະ ຫລື ເສຍກຳລັງແຮງງານ:**

| ປະເພດເສຍອົງຄະ | ເປີເຊັນການເສຍອົງຄະ | ການຮັບອຸດໜູນ |
|---|---|---|
| I | 81 -100% =100% | ຮັບເປັນລາຍເດືອນ + ຄ່າແຮງງານຜູ້ດູແລ |
| II | 71 - 80% = 80% | ຮັບເປັນລາຍເດືອນ |

3. **ວິທີຄິດໄລ່ເງິນອຸດໜູນເສຍອົງຄະ ຫຼື ເສຍກຳລັງແຮງງານ:**

- ເງິນອຸດໜູນເສຍອົງຄະ ຫຼື ເສຍກຳລັງແຮງງານໃຫ້ປະຕິບັດຕາມການຄິດໄລ່ເງິນອຸດໜູນບຳນານຕາມສູດລຸ່ມນີ້ :

**ເງິນອຸດໜູນເສຍອົງຄະ ຫລື ເສຍກຳລັງແຮງງານເທົ່າກັບ ເງິນເດືອນໆສຸດທ້າຍ ຄູນ 2% ຄູນ ປີປະກັນຕົນ**

ກໍລະນີ ເງິນອຸດໜູນເສຍອົງຄະ ນັ້ນຕ່ຳກ່ວາເງິນເດືອນລັດບໍລິຫານຕ່ຳສຸດໃຫ້ຖືເອົາເງິນເດືອນລັດບໍລິຫານຕ່ຳສຸດເລີຍ, ຖ້າສູງກ່ວາໃຫ້ເອົາຕາມການຄິດໄລ່ຕົວຈິງ.

<u>ຕົວຢ່າງ</u> : ທ່ານ ກ ຜູ້ປະກັນຕົນເສຍອົງຄະ, ເງິນເດືອນໆສຸດທ້າຍ ເທົ່າກັບ 548.000 ກີບ, ຈຳນວນປີປະກັນຕົນ 12 ປີ.

ເງິນອຸດໜູນເສຍອົງຄະ = 548.000 ກີບ x 2% x 12 ປີ =131.520 ກີບ ຕ່ຳກ່ວາເງິນເດືອນລັດບໍລິຫານຕ່ຳສຸດ, ດັ່ງນັ້ນ ເງິນອຸດໜູນເສຍອົງຄະ ຂອງທ່ານ ກ ໃຫ້ຖືເອົາເງິນເດືອນລັດບໍລິຫານຕ່ຳສຸດ ໃນແຕ່ລະໄລຍະນັ້ນເລີຍ.

4. **ເງິນຄ່າແຮງງານດູແລຜູ້ເສຍອົງຄະທົ່ວໄປໃຫ້ປະຕິບັດຕາມ ຂໍ້ 8 ໝວດ IV ຂອງຄຳແນະນຳສະບັບນີ້.**

## <u>ໝວດທີ VI</u>

## ການອຸດໜູນປ່ວຍການ

1. ອົງການປະກັນສັງຄົມແຫ່ງລັດຈະຈ່າຍເງິນຈາກກອງທຶນປະກັນສັງຄົມເພື່ອທົດແທນເງິນເດືອນໃຫ້ແກ່ຜູ້ປະກັນຕົນທີ່ເຈັບປ່ວຍ ຊຶ່ງບໍ່ເນື່ອງມາຈາກອຸປະຕິເຫດແຮງງານ ຫລື ພະຍາດອາຊີບໃນເງື່ອນໄຂດັ່ງລຸ່ມນີ້:
   - ພາຍຫຼັງຜູ້ປະກັນຕົນໄດ້ຊົມໃຊ້ນະໂຍບາຍລາພັກປິ່ນປົວສຸຂະພາບໂດຍໄດ້ຮັບເງິນເດືອນເຕັມ 3 ເດືອນຈາກການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່ຕາມລະບຽບການຄຸ້ມຄອງລັດຖະກອນແລ້ວ.
   - ມີການຢັ້ງຢືນຈາກໂຮງໝໍທີ່ປິ່ນປົວວ່າສຸຂະພາບຂອງຜູ້ກ່ຽວບໍ່ທັນແຂງແຮງຕ້ອງໄດ້ພັກຜ່ອນຕື່ມ.
   - ມີເອກະສານຢັ້ງຢືນໂຈະການຈ່າຍເງິນເດືອນ ຈາກການຈັດຕັ້ງທີ່ຜູ້ກ່ຽວສັງກັດ.
2. ເງິນອຸດໜູນປ່ວຍການ ທີ່ຈ່າຍເປັນລາຍເດືອນແມ່ນເທົ່າກັບ 60% ຂອງເງິນເດືອນໆສຸດທ້າຍຜູ້ກ່ຽວ.

   <u>ຕົວຢ່າງ</u>: ທ່ານ ກ ເຈັບປ່ວຍພັກປິ່ນປົວ, ເງິນເດືອນໆສຸດທ້າຍເທົ່າກັບ 548.000 ກີບ. **ເງິນອຸດໜູນປ່ວຍການ = 548.000 ກີບ x 60% = 328.800 ກີບ**

3. ເງິນອຸດໜູນປ່ວຍການທີ່ຜູ້ກ່ຽວຈະໄດ້ຮັບສູງສຸດບໍ່ເກີນ 6 ເດືອນ, ຖ້າກາຍ 6 ເດືອນຈະຕ້ອງໄດ້ມີການກວດກາສຸຂະພາບຄືນໃໝ່ ແລະ ເມື່ອແພດຢັ້ງຢືນວ່າ:

- ສຸຂະພາບຂອງຜູ້ກ່ຽວຈະດີຄືນເປັນປົກກະຕິພາຍໃນ 6 ເດືອນຕໍ່ໜ້າ, ຜູ້ປະກັນຕົນກໍ່ມີສິດຮັບເງິນອຸດໜູນປ່ວຍການຕໍ່ອີກ 6 ເດືອນ ແຕ່ຕ້ອງມີການກວດສຸຂະພາບຢ່າງເປັນປະຈຳ.
- ຖ້າສຸຂະພາບຂອງຜູ້ກ່ຽວຈະບໍ່ດີຄືນປົກກະຕິພາຍໃນ 6 ເດືອນຕໍ່ໜ້າ ແມ່ນຈະໄດ້ຮັບການປະເມີນລະດັບການເສຍກຳລັງແຮງງານ ເພື່ອຈະພິຈາລະນາຮັບເງິນອຸດໜູນເສຍອົງຄະຕາມ ໝວດທີ V ວ່າດ້ວຍການອຸດໜູນເສຍອົງຄະ ຫຼື ເສຍກຳລັງແຮງງານ ຂອງຄຳແນະນຳ ສະບັບນີ້.

## <u>ໝວດທີ VII</u>

## ການອຸດໜູນບຳນານ

**1. ການອຸດໜູນບຳນານ.**

ການອຸດໜູນບຳນານ ແມ່ນການອຸດໜູນເປັນລາຍເດືອນຈາກກອງທຶນປະກັນສັງຄົມ ເພື່ອທົດແທນເງິນເດືອນຂອງຜູ້ປະກັນຕົນ ເມື່ອເຖິງກະສຽນອອກຈາກລັດຖະກອນແລ້ວຮັບເບັ້ຍບຳນານ.

**2. ເງື່ອນໄຂຮັບເງິນອຸດໜູນບຳນານ.**

- ຜູ້ປະກັນຕົນທີ່ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມຢ່າງໜ້ອຍ 15 ປີ ຂຶ້ນໄປ, ເພດຊາຍມີອາຍຸກະສຽນ 60 ປີ ແລະ ເພດຍິງ55 ປີ, ຈຶ່ງມີສິດຮັບເງິນອຸດໜູນບຳນານຈາກກອງທຶນປະກັນສັງຄົມ, ສຳລັບລັດຖະກອນທີ່ສັງກັດລັດກ່ອນການຈັດຕັ້ງປະຕິບັດຕາມດຳລັດສະບັບນີ້ໃຫ້ຖືເອົາປີສັງກັດລັດເປັນປີປະກັນຕົນ.
- ລັດຖະກອນທີ່ເຮັດວຽກກັບທາດເບື່ອ ຫຼື ເງື່ອນໄຂອອກແຮງງານທີ່ຫຍຸ້ງຍາກເປັນອັນຕະລາຍ, ເພດຊາຍສາມາດຮັບບຳນານໄດ້ ເມື່ອອາຍຸ 55 ປີ ແລະ ເພດຍິງ 50 ປີ.
- ສ່ວນພະນັກງານການນຳຂັ້ນສູງ, ທະຫານ ແລະ ເຈົ້າໜ້າທີ່ຕຳຫລວດນັ້ນຈະມີລະບຽບການສະເພາະ.
- ຜູ້ທີ່ເຮັດການປະຕິວັດຊາດປະຊາທິປະໄຕແຕ່ປີ1955 – 1975 ເພດຊາຍ ສາມາດຮັບບຳນານໄດ້ ເມື່ອອາຍຸ 55 ປີ ແລະ ເພດຍິງ 50 ປີ, ອາຍຸການ 20 ປີ ເປີເຊັນບຳນານ 75% ແຕ່ສູງສຸດບໍ່ໃຫ້ເກີນ 90% ຕາມຕາຕະລາງລຸ່ມນີ້:

ຕາຕະລາງ 3 : ສັງລວມ ອາຍຸການ ແລະ % ບໍານານ

| ອາຍຸການ (ປີ) | % ບໍານານ |
|---|---|
| 20 | 75 |
| 21 | 76 |
| 22 | 77 |
| 23 | 78 |
| 24 | 79 |
| 25 | 80 |
| 26 | 81 |
| 27 | 82 |
| 28 | 83 |
| 29 | 84 |
| 30 | 85 |
| 31 | 86 |
| 32 | 87 |
| 33 | 88 |
| 34 | 89 |
| 35 ຂຶ້ນໄປ | 90 |

- ສໍາລັບພະນັກງານທີ່ເຂົ້າຮ່ວມການປະຕິວັດແຕ່ປີ 1954 ຄືນຫຼັງເປີເຊັນບໍານານເທົ່າກັບ 100% ຕາມຊັ້ນ/ ຂັ້ນ ເງິນເດືອນຂອງຜູ້ກ່ຽວ.

**3. ເງິນອຸດໜູນກ່ອນອອກຮັບບໍານານ:**

- ເງິນອຸດໜູນກ່ອນອອກຮັບບໍານານ 15% ຂອງເງິນເດືອນຕາມຊັ້ນ/ ຂັ້ນເດືອນສຸດທ້າຍຂອງຜູ້ກ່ຽວ ຄູນໃຫ້ຈໍານວນປີການ, ແມ່ນເອົາຈາກງົບປະມານຂອງລັດ ໂດຍກົມກອງຂອງຜູ້ກ່ຽວເປັນຜູ້ຄິດໄລ່ ແລະ ເບີກຈ່າຍ.

- ສໍາລັບເງິນນະໂຍບາຍລູກ ເມື່ອຜູ້ປະກັນຕົນອອກຮັບເບັ້ຍບໍານານ, ຖ້າລູກຜູ້ກ່ຽວຍັງບໍ່ທັນພົ້ນອາຍຸກະສຽນແມ່ນໃຫ້ສືບຕໍ່ຮັບເງິນນະໂຍບາຍຈາກງົບປະມານຂອງລັດນໍາກົມກອງທີ່ກ່ຽວຂ້ອງ.

**4. ວິທີຄິດໄລ່ເງິນອຸດໜູນບໍານານໃຫ້ປະຕິບັດຕາມ ສອງກໍລະນີດັ່ງນີ້:**

- ສໍາລັບຜູ້ທີ່ສັງກັດລັດກ່ອນການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ນໍາໃຊ້ 2 ສູດໆໃດສູງກວ່າໃຫ້ເອົາສູດນັ້ນ.

- **ສູດທີ 1:**

ເງິນອຸດໜູນບໍານານ = (ເງິນເດືອນຕາມຊັ້ນ/ຂັ້ນ + ເງິນອາຍຸການ) X % ບໍານານ

ຕາຕະລາງ 4 : ສົມທຽບ ອາຍຸການ ແລະ % ບຳນານ

| ອາຍຸການ (ປີ) | % ບຳນານ |
|---|---|
| 25 | 75 |
| 26 | 76 |
| 27 | 77 |
| 28 | 78 |
| 29 | 79 |
| 30 | 80 |
| 31 | 81 |
| 32 | 82 |
| 33 | 83 |
| 34 | 84 |
| 35 | 85 |
| 36 | 86 |
| 37 | 87 |
| 38 | 88 |
| 39 | 89 |
| 40 ຂຶ້ນໄປ | 90 |

- **ສູດທີ 2**

ເງິນອຸດໜູນບຳນານເທົ່າກັບ ເງິນເດືອນໆສຸດທ້າຍຄູນ 2% ຄູນຈຳນວນປີປະກັນຕົນ. ເງິນອຸດໜູນບຳນານສູງສຸດໃນສູດທີ 2 ນີ້ຕ້ອງບໍ່ເກີນ 70% ຂອງເງິນເດືອນໆສຸດທ້າຍ

- ສຳລັບຜູ້ທີ່ສັງກັດລັດພາຍຫລັງການຈັດຕັ້ງປະຕິບັດຕາມຄຳແນະນຳສະບັບນີ້ ໃຫ້ປະຕິບັດສະເພາະສູດທີ 2

**ເງິນອຸດໜູນບຳນານເທົ່າກັບ ເງິນເດືອນໆສຸດທ້າຍ ຄູນ 2% ຄູນ ຈຳນວນປີປະກັນຕົນ**

- ເງິນອຸດໜູນບຳນານສູງສຸດບໍ່ໃຫ້ເກີນ 70% ຂອງເງິນເດືອນໆສຸດທ້າຍ ຫຼື ຈຳນວນປີປະກັນຕົນສູງສຸດແມ່ນ 35 ປີ.

ຕົວຢ່າງ: ທ່ານ ຂໍ ອອກຮັບບຳນານເມື່ອອາຍຸການໄດ້ 39 ປີ,ເງິນເດືອນໆສຸດທ້າຍ ແມ່ນ891.000 ກີບ.

**ເງິນອຸດໜູນບຳນານ = 891.000 ກີບ X 70% = 623.700 ກີບ.**

**5. ອຸດໜູນບຳເນັດ.**

- ຖ້າຜູ້ປະກັນຕົນ ຫາກບໍ່ຄົບທຸກເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ 2 ໝວດ VII ຂອງຄຳແນະນຳສະບັບນີ້ແມ່ນໄດ້ຮັບເງິນອຸດໜູນບຳເນັດໂດຍຈ່າຍໃຫ້ເທື່ອດຽວ.

- ການຄິດໄລ່ເງິນອຸດໜູນບຳເນັດ ແມ່ນເອົາເງິນເດືອນໆສຸດທ້າຍ ຄູນ ໃຫ້ຈຳນວນເດືອນຈ່າຍເງິນສົມທົບ ແລ້ວ ຫານໃຫ້ 12 ເດືອນ ຕາມສູດຄິດໄລ່ດັ່ງລຸ່ມນີ້:

**ເງິນອຸດໜູນບຳເນັດ = <u>ເງິນເດືອນ ໆ ສຸດທ້າຍ X ຈຳນວນເດືອນຈ່າຍເງິນສົມທົບ</u>**

**12 ເດືອນ**

<u>ຕົວຢ່າງ</u>: ທ່ານ ຄຳ ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມພຽງແຕ່ 144 ເດືອນ, ເງິນເດືອນໆສຸດທ້າຍເທົ່າກັບ 653.000 ກີບ.

ເງິນບຳເນັດ = <u>653.000 ກີບ x 144 ເດືອນ</u> = 7.836.000 ກີບ.

12 ເດືອນ

- ລູກຂອງຜູ້ອອກຮັບບຳເນັດເຊິ່ງບໍ່ທັນພົ້ນອາຍຸກະສຽນຈະໄດ້ຮັບເງິນອຸດໜູນຜູ້ລະ12ເດືອນຂອງເງິນນະໂຍບາຍລູກ ແຕ່ເງິນດັ່ງກ່າວເອົາມາຈາກງົບປະມານຂອງລັດ ໂດຍກົມກອງຂອງຜູ້ກ່ຽວເປັນຜູ້ຄິດໄລ່ ແລະ ເບີກຈ່າຍ.

## <u>ໝວດທີ VIII</u>

## ການອຸດໜູນຄອບຄົວຜູ້ເສຍຊີວິດ

1. **ການອຸດໜູນຄອບຄົວຜູ້ເສຍຊີວິດ** ແມ່ນການຈ່າຍເງິນອຸດໜູນຈາກກອງທຶນປະກັນສັງຄົມໃຫ້ແກ່ຜູ້ຢູ່ພາຍໃຕ້ການດູແລຂອງຜູ້ປະກັນຕົນ, ພະນັກງານບຳນານ, ເສຍອົງຄະທີ່ເສຍຊີວິດ ການຈ່າຍເງິນອຸດໜູນຄອບຄົວຜູ້ເສຍຊີວິດມີ 2 ຮູບການຄື:
   - ການຈ່າຍເງິນອຸດໜູນເທື່ອດຽວ.
   - ການຈ່າຍເງິນອຸດໜູນເປັນລາຍເດືອນ.
2. ເງື່ອນໄຂການຈ່າຍເງິນອຸດໜູນເທື່ອດຽວ.

- ຜູ້ປະກັນຕົນທີ່ເປັນລັດຖະກອນສົມບູນ ແລະ ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ 1 ເດືອນຂຶ້ນໄປ, ພະນັກງານບຳນານ, ເສຍອົງຄະຫາກເສຍຊີວິດ ຄອບຄົວຂອງຜູ້ກ່ຽວຈະໄດ້ຮັບການອຸດ ໜູນເທື່ອດຽວ.
- ເງິນອຸດໜູນເທື່ອດຽວຂອງຜູ້ປະກັນຕົນ, ພະນັກງານບຳນານ, ເສຍອົງຄະທີ່ຈະໄດ້ຮັບນັ້ນແມ່ນຂຶ້ນກັບຈຳນວນເດືອນຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມ.

❖ <u>ວິທີຄິດໄລ່:</u>

ເງິນອຸດໜູນເທື່ອດຽວເທົ່າກັບ ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວ ຄູນໃຫ້ຈຳນວນເດືອນຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມແລ້ວ ຫານໃຫ້ 12 ເດືອນຕາມສູດດັ່ງນີ້ :

**ເງິນອຸດໜູນເທື່ອດຽວ= <u>ເງິນເດືອນໆສຸດທ້າຍ X ຈຳນວນເດືອນຈ່າຍເງິນສົມທົບ</u>**

**12 ເດືອນ**

<u>ຕົວຢ່າງ :</u> ທ່ານ ກໍ ເງິນເດືອນໆສຸດທ້າຍເທົ່າກັບ 540.000 ກີບ, ຈຳນວນເດືອນຈ່າຍເງິນສົມ

ທຶບເທົ່າກັບ 360 ເດືອນ.

ເງິນອຸດໜູນເທື່ອດຽວ = 540.000 ກີບ X 360 ເດືອນ = 16.200.000 ກີບ
12 ເດືອນ

ສຳລັບຜູ້ປະກັນຕົນທີ່ຈ່າຍເງິນສົມທົບແຕ່ 72 ເດືອນ ລົງມາຈະໄດ້ຮັບເງິນອຸດໜູນເທື່ອດຽວ ເທົ່າກັບ ເງິນເດືອນໆສຸດທ້າຍ ຄູນ 72 ເດືອນ ຫານ 12 ເດືອນ.

ຕົວຢ່າງ : ທ່ານ ຂໍ ເສຍຊີວິດ, ຜູ້ກ່ຽວຈ່າຍເງິນສົມທົບ ເທົ່າ 12 ເດືອນ ແລະ ເງິນເດືອນໆສຸດທ້າຍ ເທົ່າກັບ 654.000 ກີບ.

ເງິນອຸດໜູນເທື່ອດຽວ = 654.500 ກີບ x 72 ເດືອນ =3.924.000 ກີບ.
12 ເດືອນ

3. **ເງື່ອນໄຂການອຸດໜູນເປັນລາຍເດືອນ:**

ຜູ້ປະກັນຕົນທີ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມ ແຕ່ 15 ປີຂຶ້ນໄປ, ພະນັກງານ ບຳນານ, ເສຍອົງຄະ ເມື່ອເສຍຊີວິດຄອບຄົວຂອງຜູ້ກ່ຽວຈະໄດ້ຮັບການອຸດໜູນເປັນລາຍເດືອນ ເງິນອຸດໜູນໝ້າຍ: ຜູ້ມີສິດໄດ້ຮັບເງິນອຸດໜູນໝ້າຍຕ້ອງມີເງື່ອນໄຂຄົບຖ້ວນຕາມກໍລະນີ 1 ຫລື 2 ດັ່ງລຸ່ມນີ້ :

**ກໍລະນີທີ1**:

- ຜູ້ເປັນໝ້າຍນັ້ນ ໄລຍະຜ່ານມາໄດ້ອາໄສຜູ້ປະກັນຕົນ ທີ່ເສຍຊີວິດ ເປັນຜູ້ລ້ຽງດູທັງໝົດຍ້ອນ ຜູ້ກ່ຽວບໍ່ສາມາດຫາລາຍໄດ້ດ້ວຍຕົນເອງແລະບໍ່ມີແຫຼ່ງລາຍຮັບອື່ນໆເຊັ່ນ: ການຄ້າຂາຍ, ການໃຫ້ເຊົ່າ, ດອກເບ້ຍ ແລະ ອື່ນໆໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ ແລະ ມີການກວດກາຈາກ ອປລ ຂັ້ນທ້ອງຖິ່ນນັ້ນ.
- ຖ້າເປັນ ເມຍ ຫລື ເປັນຜົວຕ້ອງມີອາຍຸຄົບ 44 ປີ ຂຶ້ນໄປ ;
- ບໍ່ແມ່ນຜູ້ທີ່ໄດ້ຮັບເງິນອຸດໜູນເປັນລາຍເດືອນຈາກລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ;

**ກໍລະນີທີ 2** :

- ເປັນຜູ້ທີ່ສະພາການແພດຢັ້ງຢືນວ່າ: ຜູ້ກ່ຽວເສຍອົງຄະ ບໍ່ສາມາດອອກແຮງງານໄດ້ .
- ບໍ່ໄດ້ຮັບການອຸດໜູນເປັນລາຍເດືອນ ຈາກລະບົບປະກັນສັງຄົມ ແບບບັງຄັບໃດໜຶ່ງ.

❖ **ວິທີຄິດໄລ່ເງິນອຸດໜູນໝ້າຍ** :

ເງິນອຸດໜູນໝ້າຍຂອງຜູ້ປະກັນຕົນທີ່ເສຍຊີວິດ ເທົ່າກັບ 40% ຂອງເງິນອຸດໜູນບຳນານສົມມຸດຖານ.

ຕົວຢ່າງ: ທ່ານ ຄໍາ ເປັນຜູ້ປະກັນຕົນທີ່ເສຍຊີວິດ ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວກ່ອນເສຍຊີວິດ ເທົ່າກັບ 580.000 ກີບ, ຈຳນວນປີຈ່າຍເງິນສົມທົບເທົ່າ10 ປີ . ເງິນບຳນານສົມມຸດຖານ ເທົ່າກັບ 580.000 ກີບ x 2%x15 ປີ = 174.000 ກີບ. **ເງິນອຸດໜູນໝ້າຍ = 40% x 174.000 ກີບ = 69.600 ກີບ.**

ກໍລະນີພະນັກງານບຳນານ, ເສຍ ອົງຄະເສຍຊີວິດ, ເງິນອຸດໜູນໝ້າຍ ແມ່ນເອົາເງິນບຳນານ ຫລື ເງິນ ເສຍອົງຄະເປັນບ່ອນອີງໃນການຄິດໄລ່.

- ຜູ້ທີ່ມີສິດໄດ້ຮັບເງິນອຸດໜູນລູກກຳພ້າແມ່ນບຸກຄົນດັ່ງລຸ່ມນີ້:

ລູກຄີງ, ລູກນ້າ, ລູກລ້ຽງ ທີ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ຢູ່ໃຕ້ການຄຸ້ມຄອງຂອງລະບົບປະກັນສັງຄົມ

ແບບບັງຄັບໃດໜຶ່ງຊຶ່ງມີອາຍຸແຕ່ 18 ປີລົງມາ ຍົກເວັ້ນຜູ້ທີ່ໄດ້ແຕ່ງງານແລ້ວ ໃນກໍລະນີຍັງ ສືບຕໍ່ຮຽນໜັງສື ຕ້ອງມີການຢັ້ງຢືນຈາກໂຮງຮຽນທີ່ກ່ຽວຂ້ອງ ແລະ ຈະໄດ້ຮັບການຄຸ້ມຄອງຈົນຄົບອາຍຸ23 ປີ, ໃນກໍລະນີລູກກໍາພ້າ ຫລື ກໍາພອຍທີ່ເປັນຄົນພິການກອງທຶນປະກັນສັງຄົມຈະໃຫ້ການອຸດໜູນຈົນກ່ວາຜູ້ກ່ຽວມີວິຊາຊີບ.

❖ <u>**ວິທີຄິດໄລ່ເງິນອຸດໜູນລູກກໍາພ້າ:**</u>

ກໍລະນີຄອບຄົວຜູ້ເສຍຊີວິດໄດ້ຮັບເງິນອຸດໜູນໝ້າຍ ລູກແຕ່ລະຄົນຈະໄດ້ຮັບ 20% ຂອງເງິນບໍານານສົມມຸດຖານ, ແຕ່ເງິນອຸດໜູນລູກທັງໝົດ ບໍ່ໃຫ້ເກີນ 60% ຂອງເງິນບໍານານສົມມຸດຖານ.

<u>ຕົວຢ່າງ:</u> ທ່ານ ງໍ ທີ່ເສຍຊີວິດ, ຜູ້ກ່ຽວມີລູກ 2 ຄົນ, ເງິນບໍານານສົມມຸດຖານ ຂອງທ່ານ ງໍ ເທົ່າກັບ 174.000 ກີບ.

**ເງິນອຸດໜູນກໍາພ້າ = 20% x 174.000 ກີບ x 2 ຄົນ = 69.600 ກີບ**

ກໍລະນີຄອບຄົວຜູ້ເສຍຊີວິດ ບໍ່ໄດ້ຮັບເງິນອຸດໜູນໝ້າຍ ລູກແຕ່ລະຄົນຈະໄດ້ຮັບ 30% ຂອງເງິນບໍານານສົມມຸດຖານ, ແຕ່ເງິນອຸດໜູນລູກທັງໝົດ ບໍ່ໃຫ້ເກີນ 60%ຂອງເງິນບໍານານສົມມຸດຖານ.

<u>ຕົວຢ່າງ</u>: ທ່ານ ຈໍ ເສຍຊີວິດ, ຜູ້ກ່ຽວມີລູກ 3ຄົນ.

**ເງິນອຸດໜູນກໍາພ້າ = 174.000 ກີບ x 60% = 104.400 ກີບ.**

- ເງິນອຸດໜູນລ້ຽງດູ ພໍ່ ແລະ ແມ່, ພໍ່ ຫລື ແມ່ ຈະຕ້ອງຄົບ 1 ໃນ 2 ກໍລະນີດັ່ງລຸ່ມນີ້:

➢ ຜູ້ປະກັນຕົນທີ່ເສັຽຊີວິດນັ້ນ ເປັນລູກຜູ້ດຽວທີ່ລ້ຽງດູ ພໍ່ແມ່, ຊຶ່ງແມ່ມີ ອາຍຸ 55 ປີ ແລະ ພໍ່ມີອາຍຸ 60 ປີຂຶ້ນໄປ;

➢ ພໍ່ ແລະ ແມ່, ພໍ່ ຫລືແມ່ ນັ້ນເປັນຜູ້ເສຍອົງຄະໂດຍມີສະພາການແພດຢັ້ງຢືນ.

❖ <u>**ວິທີຄິດໄລ່ເງິນອຸດໜູນລ້ຽງດູ ພໍ່ ແລະ ແມ່, ພໍ່ ຫລື ແມ່.**</u>

ກໍລະນີ ພໍ່ ແລະ ແມ່, ພໍ່ ຫລື ແມ່ ຂອງຜູ້ເສຍຊີວິດ ບໍ່ມີຜູ້ລ້ຽງດູ ເງິນອຸດໜູນລ້ຽງດູ ພໍ່ ແລະແມ່, ພໍ່ຫລື ແມ່ ເທົ່າກັບ 40% ຂອງເງິນບໍານານສົມມຸດຖານ, ແຕ່ເງິນອຸດໜູນທັງ 2 ຄົນລວມກັນສູງສຸດ ບໍ່ເກີນ 60% ຂອງເງິນບໍານານສົມມຸດຖານ.

<u>ຕົວຢ່າງ</u>: ທ່ານ ສໍ ເສຍຊີວິດ ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວ ເທົ່າກັບ 545.000 ກີບ, ຈໍານວນປີຈ່າຍເງິນສົມທົບ 10 ປີ.ເງິນບໍານານສົມມຸດຖານ ຂອງທ່ານ ສໍ = 545.000 ກີບ x 2% x 15ປີ = 163.500 ກີບ.

ກໍລະນີມີແຕ່ພໍ່ ຫລື ແມ່: ເງິນອຸດໜູນລ້ຽງດູ= 40% x163.500 ກີບ = 65.400 ກີບ.

ກໍລະນີມີທັງພໍ່ ແລະ ແມ່:ເງິນອຸດໜູນລ້ຽງດູ= 60% x 163.500 ກີບ = 98.100 ກີບ.

## ໝວດທີ IX
## ການອຸດໜູນສົ່ງສະການ

**1. ເງື່ອນໄຂຂອງຜູ້ມີສິດໄດ້ຮັບເງິນອຸດໜູນສົ່ງສະການ.**

ເມື່ອບຸກຄົນຕໍ່ໄປນີ້ຫາກເສຍຊີວິດ ແມ່ນມີສິດໄດ້ຮັບເງິນອຸດໜູນສົ່ງສະການ:

- ຜູ້ປະກັນຕົນທີ່ເປັນລັດຖະກອນສົມບູນ ຊຶ່ງໄດ້ຈ່າຍເງິນສົມທົບນັບແຕ່ 1 ເດືອນຂຶ້ນໄປ, ພະນັກງານບຳນານ, ເສຍອົງຄະ;
- ພະນັກງານຕາມສັນຍາທີ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມຕາມລະບຽບການ ແຕ່ 1 ເດືອນຂຶ້ນໄປ;
- ຄູ່ສົມລົດ ແລະ ລູກຂອງຜູ້ປະກັນຕົນ, ພະນັກງານບຳນານ, ເສຍອົງຄະ,ພະນັກງານຕາມສັນຍາ ທີ່ຖືກຕ້ອງຕາມກົດໝາຍ ເຊິ່ງບໍ່ໄດ້ຮັບເງິນອຸດໜູນສົ່ງສະການຈາກລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ;
- ຜູ້ເສຍອົງຄະຮາກຖານ. ສ່ວນຄູ່ສົມລົດ ແລະ ລູກຂອງຜູ້ກ່ຽວແມ່ນບໍ່ໄດ້ຮັບເງິນສົ່ງສະການ.

<u>**ເງື່ອນໄຂຮັບການອຸດໜູນສົ່ງສະການສຳລັບຄູ່ສົມລົດ ແລະ ລູກ :**</u>

- ຄູ່ສົມລົດ ແລະ ລູກຄີງ, ລູກນ້າ, ລູກລ້ຽງຕ້ອງມີອາຍຸບໍ່ເກີນ 18 ປີ ທີ່ບໍ່ຢູ່ໃຕ້ການຄຸ້ມຄອງຂອງລະບອບປະກັນສັງຄົມແບບບັງຄັບໃດໜຶ່ງ, ກໍລະນີລູກຍັງຮຽນໜັງສືແມ່ນອາຍຸບໍ່ເກີນ 23 ປີ ແລະ ບໍ່ທັນແຕ່ງງານ.

- ກໍລະນີຜູ້ປະກັນຕົນທີ່ໄດ້ຈ່າຍເງິນສົມທົບຄົບ15 ປີ ຂຶ້ນໄປຫາກເສຍຊີວິດຄູ່ສົມລົດທີ່ບໍ່ໄດ້ແຕ່ງງານໃໝ່ ແລະ ລູກທີ່ມີເງື່ອນໄຂຄົບດັ່ງໄດ້ກ່າວໄວ້ຂ້າງເທິງນັ້ນຍັງຈະໄດ້ຮັບເງິນອຸດໜູນສົ່ງສະ ການຕໍ່ໄປ.

**2. ວິທີຄິດໄລ່ເງິນອຸດໜູນສົ່ງສະການ.**

- ຜູ້ປະກັນຕົນ ແລະ ພະນັກງານຕາມສັນຍາທີ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມຕາມລະບຽບການ ແຕ່ 1 ເດືອນ ຂຶ້ນໄປ ທີ່ເສຍຊີວິດຈະໄດ້ຮັບເງິນອຸດໜູນສົ່ງສະການເທົ່າກັບ ເງິນເດືອນໆສຸດທ້າຍຂອງພວກກ່ຽວ ຄູນ 9 ເດືອນ.

- ພະນັກງານບຳນານ, ເສຍອົງຄະທີ່ເສຍຊີວິດຈະໄດ້ຮັບເງິນອຸດໜູນສົ່ງສະການເທົ່າກັບເງິນບຳນານ ຫຼື ເງິນເສຍອົງຄະເດືອນສຸດທ້າຍ ຄູນ 9 ເດືອນ.

- ເມື່ອຄູ່ສົມລົດຂອງຜູ້ປະກັນຕົນ ແລະ ພະນັກງານຕາມສັນຍາທີ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມຕາມລະບຽບການ ແຕ່ 1 ເດືອນ ຂຶ້ນໄປ,ພະນັກງານບຳນານ,ເສຍອົງຄະ ຫາກເສຍຊີວິດຈະໄດ້ຮັບເງິນອຸດໜູນສົ່ງສະການເທົ່າກັບເງິນເດືອນໆສຸດທ້າຍຂອງພວກກ່ຽວ ຄູນ 6 ເດືອນ.

- ເມື່ອລູກຂອງຜູ້ປະກັນຕົນ,ພະນັກງານຕາມສັນຍາທີ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມຕາມລະບຽບການ ແຕ່ 1 ເດືອນຂຶ້ນໄປ, ພະນັກງານບຳນານ,ເສຍອົງຄະ ຫາກເສຍຊີວິດຈະໄດ້ຮັບເງິນອຸດໜູນສົ່ງສະການເທົ່າກັບເງິນເດືອນໆສຸດທ້າຍຂອງພວກກ່ຽວ ຄູນ 3 ເດືອນ.

<u>ໝວດທີ X</u>

## ລະບຽບການກອງທຶນ ແລະ ອົງການຄຸ້ມຄອງລະບອບປະກັນສັງຄົມ

ສຳລັບລະບຽບການຄຸ້ມຄອງກອງທຶນປະກັນສັງຄົມ ມອບໃຫ້ອຳນວຍການອົງການປະກັນສັງຄົມແຫ່ງລັດ ເປັນຜູ້ຄົ້ນຄ້ວານຳສະເໜີສະພາບໍລິຫານພິຈາລະນາຮັບຮອງເອົາ.

ໝວດທີ XI

## ວິທີຈັດຕັ້ງປະຕິບັດ

1. ມອບໃຫ້ ອົງການປະກັນສັງຄົມແຫ່ງລັດ, ພາກສ່ວນທີ່ກ່ຽວຂ້ອງເປັນຜູ້ເຜີຍແຜ່, ຈັດຕັ້ງປະຕິບັດຄຳແນະນຳ ສະບັບນີ້ ຕາມພາລະບົດບາດ ແລະ ໜ້າທີ່ຂອງໃຜລາວ.
2. ຄຳແນະນຳສະບັບນີ້ ມີຜົນສັກສິດນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອ່ອນຈັນ ທຳມະວົງ

ພິມທີ່ໂຮງພິມໜຸ່ມລາວ ໂທ : 21 5721 ແຟັກ: 21 6338